ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 02 /ສພຂ.ຊຍ

ໄຊຍະບູລີ, ວັນທີ 13 ມັງກອນ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍ ການຮັບຮອງບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ແລະ ມາດຕາ 59;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມ ຄັ້ງວັນທີ 11 ມັງກອນ 2024.

ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024, ການປະກອບຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ສະມາຊິກສະພາປະຊາຊົນແຂວງ.

### ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ປະຈຳປີ 2023.

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ແລະ ເຫັນດີຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023, ສາມາດປະຕິບັດສຳເລັດໄດ້ຫຼາຍຄາດໝາຍ. ພົ້ນເດັ່ນ ແມ່ນຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ ໜັກແໜ້ນ, ເສດຖະກິດສືບຕໍ່ຂະຫຍາຍຕົວ ບັນລຸໄດ້ 5%, ເຮັດໃຫ້ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຫຼາຍຄາດໝາຍທາງດ້ານເສດຖະກິດ ປະຕິບັດໄດ້ລື່ນແຜນການ ເປັນຕົ້ນ ການຜະລິດກະສິກຳຂອງປະຊາຊົນ ແລະ ພາກທຸລະກິດ ແມ່ນເປັນຂະບວນການຢ່າງກວ້າງຂວາງ ເຮັດໃຫ້ການສົ່ງອອກບັນລຸໄດ້ 89,04 ລ້ານໂດລາສະຫະລັດ, ປະຕິບັດລາຍຮັບໄດ້ທັງໝົດ 1.765,43 ຕື້ກີບ ເທົ່າກັບ 116,55% (ເກີນແຜນ 250,70 ຕື້ກີບ); ການລົງທຶນປະຕິບັດໄດ້ 3.663 ຕື້ກີບ; ບາງຄາດໝາຍດ້ານວັດທະນະທຳ-ສັງຄົມ ໂດຍສະເພາະ ອັດຕາເຂົ້າຮຽນຂອງເດັກ 5 ປີ, ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ 6-10 ປີ, ການຂະຫຍາຍອັດຕາປົກຄຸມປະກັນສັງຄົມ ປະຕິບັດໄດ້ລື່ນແຜນການ 63%, ການພັດທະນາສີມືແຮງງານ ໄດ້ລື່ນແຜນການ 3 ເທົ່າຕົວ, ຮັກສາອັດຕາປົກຄຸມປະກັນສຸຂະພາບ ໄດ້ 100%, ສາມາດຜະລິດເຂົ້າໄດ້ລື່ນຄາດໝາຍ 10,6%.

ມາດຕາ 2 ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2024.

ກອງປະຊຸມເຫັນດີ ຮັບຮອງເອົາຄາດໝາຍ ພັດທະນາເສດຖະກິດ-ສັງຄົມ ປີ 2024 ຂອງແຂວງ ດັ່ງນີ້:

1. ຄາດໝາຍເສດຖະກິດມະຫາພາກ.

1.1. ຄາດໝາຍການເຕີບໂຕເສດຖະກິດ.

- ຄາດຄະເນການເຕີບໂຕເສດຖະກິດຂອງແຂວງ ປີ 2024 ໃຫ້ຂະຫຍາຍຕົວຢູ່ໃນລະດັບ 5,5% ແລະ ລວມຍອດຜະລິດຕະພັນພາຍໃນ 15.762 ຕື້ກີບ, ສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ 36,93 ລ້ານກີບ.
  - + ຂະແໜງກະສິກຳ ເພີ່ມຂຶ້ນ 3%, ກວມ 26%.
  - + ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 8,7%, ກວມ 38%.
  - + ຂະແໜງການບໍລິການ ເພີ່ມຂຶ້ນ 3,7% ກວມ 36% ຂອງລວມຍອດຜະລິດຕະພັນພາຍ.

1.2. ວຽກການເງິນ

- ດ້ານລາຍຮັບ: ຈັດເກັບລາຍຮັບ ໃຫ້ໄດ້ 2.092,29 ຕື້ກີບຂຶ້ນໄປ, ໃນນີ້: ລາຍຮັບພູດສູນກາງ ໃຫ້ໄດ້ 1.377,00 ຕື້ກີບ; ລາຍຮັບພູດທ້ອງຖິ່ນ ໃຫ້ໄດ້ 715,29 ຕື້ກີບ.
- ດ້ານລາຍຈ່າຍ: ຄຸ້ມຄອງລາຍຈ່າຍ ບໍ່ໃຫ້ເກີນ 525,60 ຕື້ກີບ (ບໍ່ລວມລາຍຈ່າຍການລົງທຶນ).
- ດຸນດ່ຽງງົບປະມານ: ເກີນດຸນງົບປະມານ 189,68 ຕື້ກີບ.

1.3. ແຫລ່ງທຶນພັດທະນາ.

1) ສູ້ຊົນລະດົມທຶນເພື່ອພັດທະນາ ໃຫ້ໄດ້ 27% ຂອງ GDP ຫຼື ເທົ່າກັບ 4.256 ຕື້ກີບ. ໃນນີ້:
   - + ການລົງທຶນຂອງລັດ ກວມເອົາ 3% ຫຼື ເທົ່າກັບ 128 ຕື້ກີບ.
   - + ການລົງທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ 10% ຫຼື ເທົ່າກັບ 426 ຕື້ກີບ.
   - + ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 55% ຫຼື ເທົ່າກັບ 2.340 ຕື້ກີບ
   - + ການປ່ອຍສິນເຊື່ອທະນາຄານ ກວມເອົາ 32% ຫຼື ເທົ່າກັບ 1.362 ຕື້ກີບ.

2. ຄາດໝາຍດ້ານເສດຖະກິດບັນດາຂະແໜງການ.

2.1. ຄາດໝາຍຂະແໜງ ກະສິກຳ ແລະ ປ່າໄມ້.

- ສູ້ຊົນຜະລິດເຂົ້າບໍ່ໃຫ້ຫຼຸດ 190.000 ໂຕນ;
- ສູ້ຊົນປູກພືດສະບຽງອາຫານໃຫ້ໄດ້ 150.000 ໂຕນ;
- ສູ້ຊົນປູກພືດເປັນສິນຄ້າໃຫ້ໄດ້ຜົນຜະລິດ 2.000.000 ໂຕນ;
- ສູ້ຊົນໃຫ້ຝູງສັດລ້ຽງ (ງົວ, ຄວາຍ) ຂະຫຍາຍຕົວ ໃນລະດັບ 7%;
- ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 23.816 ໂຕນ, ສະເລ່ຍບໍ່ໃຫ້ຫຼຸດ 55ກິໂລ/ຄົນ/ປີຂຶ້ນໄປ;
- ສູ້ຊົນຜະລິດສັດເປັນສິນຄ້າ ສົ່ງອອກໄປຕ່າງແຂວງ ໃຫ້ໄດ້ 35.000 ໂຕ: ງົວ 17.000 ໂຕ, ຄວາຍ 7.000 ໂຕ, ໝູ 11.000ໂຕ;
- ສູ້ຊົນປູກໄມ້ໃຫ້ໄດ້ 3.560 ເຮັກຕາ ແລະ ຟື້ນຟູປ່າໃຫ້ໄດ້ 21.900 ເຮັກຕາ;
- ສູ້ຊົນລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 2.300 ຄອບຄົວ, ສ້າງຄອບຄົວພັດທະນາໃຫ້ໄດ້ 2.000 ຄອບຄົວ;
- ສູ້ຊົນສ້າງເມືອງພົ້ນທຸກ ໃຫ້ໄດ້ 1 ເມືອງ (ເມືອງຊຽງຮ່ອນ), ບ້ານພົ້ນທຸກໃຫ້ໄດ້ 19 ບ້ານ, ສ້າງບ້ານພັດທະນາ ໃຫ້ໄດ້ 30 ບ້ານ;
- ສູ້ຊົນສ້າງບ້ານໃຫ່ຍເປັນຕົວເມືອງນ້ອຍໃຫ້ໄດ້ 1 ຈຸດ ບ້ານ ບົວບານ - ເມືອງວາ;
- ສູ້ຊົນສ້າງບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 20 ບ້ານ.

2.2. ຄາດໝາຍຂະແໜງ ອຸດສາຫະກຳ ແລະ ການຄ້າ.

- ລວມຍອດມູນຄ່າການຜະລິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ບັນລຸ 205,46 ຕື້ກີບ;

- ລວມຍອດມູນຄ່າການຈຳໜ່າຍຜະລິດຕະພັນອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 273,19 ຕື້ກີບ;
- ມູນຄ່າສົ່ງອອກສິນຄ້າໄປຕ່າງປະເທດ ບັນລຸ 95.281.758 ໂດລາ;
- ມູນຄ່າການນຳເຂົ້າສິນຄ້າຈາກຕ່າງປະເທດ ໃຫ້ຢູ່ໃນລະດັບ 56.810.237 ໂດລາ;
- ມູນຄ່າການຈໍລະຈອນສິນຄ້າພາຍໃນແຂວງ ໃຫ້ຂະຫຍາຍຕົວເພີ່ມຂຶ້ນອີກ 2% ຂຶ້ນໄປ;
- ຕິດຕາມ, ຄຸ້ມຄອງ ລາຄາສິນຄ້າໃນທ້ອງຕະຫລາດ ບໍ່ໃຫ້ເໜັງຕີງເກີນ 12% ຂອງລາຄາສິນຄ້າ.

2.3. ຄາດໝາຍຂະແໜງ ພະລັງງານ ແລະ ບໍ່ແຮ່.

- ປະສານສົມທົບ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໂຄງການພະລັງງານໄຟຟ້າ ເປັນຕົ້ນ: ສູ້ຊົນໃຫ້ ກ້າວສູ່ການເຈລະຈາ PDA 01 ໂຄງການ ແລະ ສູ້ຊົນໃຫ້ບ້ານມີໄຟຟ້າຊົມໃຊ້ໃນລະບົບ 01 ບ້ານ ແລະ ຄອບຄົວໃຫ້ໄດ້ 1.000 ຄອບຄົວ;
- ເອົາໃຈໃສ່ຄຸ້ມຄອງ, ຕິດຕາມສັນຍາ, ບົດບັນທຶກຕໍ່ອະນຸຍາດສັນຍາ ໂຄງການກໍ່ສ້າງລະບົບຕາຂ່າຍໄຟຟ້າ ຢູ່ພາຍໃນແຂວງ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບ, ກົດໝາຍ ແລະ ສຳເລັດຕາມແຜນການວາງໄວ້ ພ້ອມທັງສະຫຼຸບລາຍງານຂັ້ນເທິງໃຫ້ທັນເວລາ;
- ສືບຕໍ່ປັບປຸງລະບົບຕາຂ່າຍໄຟຟ້າ 0,4 kV, 22 kV ແລະ ສະຖານີຍ່ອຍ ເພື່ອໃຫ້ລະບົບມີຄວາມສະຖຽນລະພາບ ສະໜອງພະລັງງານໃຫ້ຜູ້ຊົມໃຊ້ພຽງພໍ ແລະ ທົ່ວເຖິງ;
- ສືບຕໍ່ອອກໃບອະນຸຍາດ ແລະ ຕໍ່ໃບອະນຸຍາດດຳເນີນກິດຈະການໄຟຟ້າໃຫ້ບັນດາບໍລິສັດເອກະຊົນ, ລົງຕິດຕາມໂຄງການກໍ່ສ້າງລະບົບຕາຂ່າຍໄຟຟ້າ ທີ່ກຳລັງຈັດຕັ້ງປະຕິບັດໃຫ້ໄປຕາມແຜນການ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກໄຟຟ້າຂອງລາວ;
- ສືບຕໍ່ຄົ້ນຄວ້າ, ກວດກາ ແລະ ປະເມີນຄືນ ບັນດາໂຄງການສຶກສາຄວາມເປັນໄປໄດ້ ເຂື່ອນໄຟຟ້າຂະໜາດນ້ອຍທີ່ໄດ້ອະນຸມັດຜ່ານມາ ເພື່ອຄັດເລືອກເອົາໂຄງການ ທີ່ມີຄວາມຄືບໜ້າ ແລະ ມີເງື່ອນໄຂ ໄດ້ກ້າວເຂົ້າສູ່ຂັ້ນຕອນພັດທະນາ;
- ສືບຕໍ່ຊຸກຍູ້, ສົ່ງເສີມ ການຜະລິດ ແລະ ຈຳໜ່າຍ ພະລັງງານ (ພາຍໃນ ແລະ ຕ່າງປະເທດ) ໃນປີ 2024: ຄາດຄະເນຜະລິດ (ຊື້) ກະແສໄຟຟ້າ ໃຫ້ໄດ້ 248,46 ລ້ານກິໂລວັດໂມງ, ມູນຄ່າ 310,39 ຕື້ກີບ; ຄາດຄະເນຈຳໜ່າຍກະແສໄຟຟ້າ ໃຫ້ໄດ້ 241,97 ລ້ານກິໂລວັດໂມງ, ມູນຄ່າ 247,37 ຕື້ກີບ;
- ສືບຕໍ່ ຄຸ້ມຄອງ, ຕິດຕາມກວດກາ, ກວດຜ່ານ ແລະ ຢັ້ງຢືນການປະຕິບັດ ໂຄງການລົງທຶນຊອກຄົ້ນ, ສຳຫຼວດແຮ່ທາດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ - ເຕັກນິກ ໃນຂອບເຂດທົ່ວແຂວງ; ເຂົ້າຮ່ວມໃນການລົງກວດກາສະຖານທີ່ຂຸດຄົ້ນຫີນແຮ່ - ຊາຍ ແລະ ເກັບຕົວຢ່າງໄປວິໄຈ - ທົດລອງ ຢູ່ກົມທໍລະນີສາດ ແລະ ແຮ່ທາດ; ປັບປຸງລະບົບ ການຄຸ້ມຄອງວຽກງານຊອກຄົ້ນ-ສຳຫຼວດ ແຮ່ທາດຕ່າງໆໃນຂັ້ນແຂວງອະນຸຍາດ ໃຫ້ໄປຕາມລະບົບນິຕິກຳຢ່າງເຂັ້ມງວດ; ສືບຕໍ່ຕິດຕາມ ໂຄງການຊອກຄົ້ນ-ສຳຫຼວດ ທີ່ຍັງມີການເຄື່ອນໄຫວ ຂັ້ນສູນກາງ ແລະ ທ້ອງຖິ່ນອະນຸຍາດ ແລະ ເກັບກຳຂໍ້ມູນຈຸດປະກົດແຮ່ທາດ ປະເພດຕ່າງໆ ພ້ອມທັງສ້າງຖານຂໍ້ມູນໃຫ້ເປັນລະບົບເພື່ອດຶງດູດນັກລົງທຶນ;
- ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ, ກວດກາ ທຸກຫົວໜ່ວຍທຸລະກິດດ້ານບໍ່ແຮ່ໃນທົ່ວແຂວງ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບ, ກົດໝາຍ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສິ່ງແວດລ້ອມ;
- ສືບຕໍ່ເອົາໃຈໃສ່ ຕິດຕາມໂຄງການຂຸດຄົ້ນຖ່ານຫີນ ຂອງບໍລິສັດ ພູໄຟມາຍນິງ (ໄຟຟ້າຫົງສາ) ຈຳກັດ ແລະ ໂຄງການຂຸດຄົ້ນຫີນປູນ ຂອງບໍລິສັດເມືອງເງິນເອັນເຕີພຣາຍ ຈຳກັດ ຢູ່ເຂດບ້ານປີໜີ, ເມືອງເງິນ ເພື່ອປ້ອນເຂົ້າໂຮງງານຜະລິດໄຟຟ້າພະລັງງານຄວາມຮ້ອນຫົງສາ;
- ສືບຕໍ່ຊຸກຍູ້, ຕິດຕາມໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ, ທອງແດງ ແລະ ແຮ່ເງິນ ຂອງບໍລິສັດ (MPG) ມາຍນິ້ງ ຈຳກັດ ຢູ່ບ້ານປາງຄຳ, ເມືອງປາກລາຍ ໄດ້ດຳເນີນການຂຸດຄົ້ນຕາມແຜນການ;
- ຕິດຕາມໂຄງການກະກຽມຂຸດຄົ້ນບໍ່ແຮ່, ໂຮງງານປຸງແຕ່ງແຮ່ຄຳ ແລະ ແຮ່ທອງ ຂອງບໍລິສັດມໍລະກົດຢຽນຊຽນ

ຈຳກັດ ຢູ່ເຂດບ້ານ ໂຄກສະຫ້ອນ, ເມືອງ ປາກລາຍ;

- ຕິດຕາມຊຸກຍູ້ ໂຄງການຂຸດຄົ້ນແຮ່ທາດມັງການ ຢູ່ບ້ານຫາດແກ້ວ ເມືອງໄຊຍະບູລີ ຂອງບໍລິສັດ ພົງຊັບ ທະວີ ຈຳກັດຜູ້ດຽວ;
- ສືບຕໍ່ຊຸກຍູ້ຕິດຕາມບັນດາໂຄງການຂຸດຄົ້ນແຮ່ທາດແບບທົດລອງ ເຊັ່ນ: ແຮ່ຄຳຕົກຂ້ອນ, ແຮ່ເຫຼັກ ທີ່ກຳລັງດຳເນີນການຈັດຕັ້ງປະຕິບັດຢູ່ພາຍໃນແຂວງ ໃຫ້ໄດ້ດຳເນີນໄປຕາມແຜນການ;
- ສືບຕໍ່ຊຸກຍູ້, ສົ່ງເສີມ ການຜະລິດ ແລະ ຈຳໜ່າຍແຮ່ທາດ (ພາຍໃນ ແລະ ຕ່າງປະເທດ) ຢູ່ພາຍໃນແຂວງ ໃນປີ 2023;
- ຄາດຄະເນຜະລິດແຮ່ທາດ ຫີນປູນ ໃຫ້ໄດ້ ຈຳນວນ 300.000 ແມັດກ້ອນ, ມູນຄ່າ 26,5 ຕື້ກີບ, ໃນນີ້ ຈຳໜ່າຍພາຍໃນ ໃຫ້ໄດ້ 50.000 ແມັດກ້ອນ ມູນຄ່າ 4 ຕື້ກີບ, ຈຳໜ່າຍຕ່າງປະເທດ ໃຫ້ໄດ້ 250.000 ແມັດກ້ອນ ມູນຄ່າ 22,5 ຕື້ກີບ.

**2.4. ຄາດໝາຍຂະແໜງ ໂຍທາທິການ ແລະ ຂົນສົ່ງ.**

- ສືບຕໍ່ປັບປຸງເສັ້ນທາງຫຼວງແຫ່ງຊາດ ໃຫ້ມີຄວາມລຶງລ່ຽນ ເຊື່ອມໂຍງ - ເຊື່ອມຈອດບັນດາແຂວງ, ປະເທດໃກ້ຄຽງ ແລະ ແລວເສດຖະກິດທາງລົດໄຟ ໃຫ້ມີປະສິດທິຜົນ, ປອດໄພ ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນໃນການຜະລິດພາຍໃນປະເທດ ແລະ ສົ່ງອອກ, ສະໜັບສະໜູນໃຫ້ເສດຖະກິດມະຫາພາກຂະຫຍາຍຕົວຢ່າງໝັ້ນທ່ຽງ;
- ສືບຕໍ່ປັບປຸງທາງຫຼວງທ້ອງຖິ່ນ ໃຫ້ມີຄວາມສະດວກໃນການຂົນສົ່ງສິນຄ້າ ຫາ ເສັ້ນທາງຫຼວງແຫ່ງຊາດ ເພື່ອຂົນສົ່ງອອກສູ່ແລວເສດຖະກິດທາງລົດໄຟ;
- ສືບຕໍ່ປັບປຸງລະບົບການຂົນສົ່ງຜ່ານແດນ ໂດຍພັດທະນາຈຸດພັກຄ່ຽນຖ່າຍສິນຄ້າຢູ່ດ່ານສາກົນ;
- ສືບຕໍ່ກຳນົດຈຸດຄ່ຽນຖ່າຍການຂົນສົ່ງສິນຄ້າກະສິກຳ ເຊື່ອມທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ;
- ສືບຕໍ່ກຳນົດຈຸດຄ່ຽນຖ່າຍສິນຄ້າ ລະຫວ່າງ ຈຸດພາຍໃນເທດສະບານແຂວງ ຫາ ແຂວງອ້ອມຂ້າງ ແລະ ປະເທດໃກ້ຄຽງ;
- ສືບຕໍ່ແກ້ໄຂການນຳໃຊ້ທີ່ດິນສາທາລະນະ ໃຫ້ຖືກຕ້ອງຕາມການກຳນົດຂອງຜັງເມືອງເທດສະບານແຂວງໄຊຍະບູລີ, ສຶກສາຄວາມເປັນໄປໄດ້ ສະເໜີແຫຼ່ງທຶນກໍ່ສ້າງລະບົບປ້ອງກັນນໍ້າຖ້ວມຕົວເມືອງໄຊຍະບູລີ;
- ສືບຕໍ່ການແກ້ໄຂບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ ທີ່ຈັດຕັ້ງປະຕິບັດທີ່ຫຼ້າຊ້າ, ບໍ່ປະຕິບັດຕາມສັນຍາ;
- ສືບຕໍ່ການຄຸ້ມຄອງໜີ້ສິນຂອງໂຄງການກໍ່ສ້າງພື້ນຖານໂຄງລ່າງ ຈຳກັດການຈັດຕັ້ງປະຕິບັດໂຄງການໃໝ່ທີ່ບໍ່ຈຳເປັນ ເພື່ອຫຼຸດຜ່ອນໜີ້ສິນ;
- ສືບຕໍ່ແກ້ໄຂບັນຫາຜົນກະທົບຂອງເສັ້ນທາງຫຼວງທີ່ເກີດຈາກການບຸກລຸກຂອງສັງຄົມ ທີ່ເປັນການລະເມີດກົດໝາຍທາງຫຼວງ;
- ສືບຕໍ່ຄວບຄຸມນໍ້າໜັກເກີນ ຈາກລົດບັນທຸກສິນຄ້າທີ່ແລ່ນຜ່ານທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ;
- ສືບຕໍ່ສ້າງສິ່ງອຳນວຍຄວາມສະດວກດ້ານການຂົນສົ່ງໂດຍສານ ເພື່ອຕ້ອນຮັບປີທ່ອງທ່ຽວລາວ ປີ 2024.

**2.5. ຄາດໝາຍຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.**

- ຈັດສັນທີ່ດິນຂັ້ນເມືອງ ໃຫ້ໄດ້ 01 ເມືອງ, ຈັດສັນທີ່ດິນຂັ້ນບ້ານ ໃຫ້ໄດ້ 27 ບ້ານ, ຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝ ໃຫ້ໄດ້ 6.000 ຕອນ, ເກັບກຳຂໍ້ມູນໂຕເລກສຳມະໂນທີ່ດິນໃຫ້ເພີ່ມຂຶ້ນ 400 ຕອນ ແລະ ປະເມີນຄືນການຈັດສັນທີ່ດິນ 8 ປະເພດ ຂັ້ນບ້ານໃຫ້ໄດ້ 63 ບ້ານ;
- ສູ້ຊົນສ້າງບ້ານສີຂຽວ, ສະອາດ, ງາມຕາ ທົ່ວແຂວງ ໃຫ້ໄດ້ 40 ບ້ານ, ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານວິຊາການ ຫ້ອງການຊັບພະຍາກອນທຳມະຊາດເມືອງ ທາງດ້ານວຽກງານສິ່ງແວດລ້ອມ ແລະ ການປ່ຽນແປງດິນ

ຟ້າອາກາດ ໃຫ້ໄດ້ 11 ເມືອງ, ໂຄສະນາ, ປູກຈິດສຳນຶກ ການປົກປັກຮັກສາສິ່ງແວດລ້ອມ ລວມທັງການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດທາງທຳມະຊາດ ໃຫ້ໄດ້ 11 ເມືອງ, ຊຸກຍູ້, ຕິດຕາມ, ກວດກາ ປະເມີນຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ (ISp) ຂັ້ນແຂວງ, ຂັ້ນເມືອງ;

- ເຊື່ອມສານແຜນຈັດສັນທີ່ດິນ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານໃຫ້ໄດ້ 11 ເມືອງ, ສ້າງຖານຂໍ້ມູນດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ, ໄພພິບັດ 11 ເມືອງ ແລະ ອອກໃບຢັ້ງຢືນສິ່ງແວດລ້ອມໃຫ້ໄດ້ 420 ຫົວໜ່ວຍ;
- ປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະປະສານງານຄຸ້ມຄອງອ່າງຮັບນ້ຳ ຂັ້ນແຂວງໃຫ້ໄດ້ 10 ອ່າງ, ສຶກສາສະພາບລວມອ່າງຮັບນ້ຳ ໃຫ້ໄດ້ 1 ອ່າງ, ສ້າງແຜນຄຸ້ມຄອງອ່າງຮັບນ້ຳທີ່ເປັນບູລິມະສິດ ໃຫ້ໄດ້ 1 ອ່າງ, ຕິດຕາມກວດກາຄຸນນະພາບນ້ຳໃຫ້ໄດ້ 28 ຈຸດ, ອອກໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ 15 ຫົວໜ່ວຍ, ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມໃຫ້ໄດ້ 1 ແຫ່ງ ແລະ ສ້າງຫຼາວັດແທກນ້ຳເຝົ້າລະວັງໄພ ໃຫ້ໄດ້ 2 ຈຸດ ແລະ ເກັບກຳຂໍ້ມູນການນຳໃຊ້ນ້ຳໃຕ້ດິນ ແລະ ນ້ຳໜ້າດິນ ໃຫ້ໄດ້ 2 ເມືອງ ແລະ ຕິດຕາມສະພາບອາກາດຕະຫຼອດ 24 ຊົ່ວໂມງ ພ້ອມທັງລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງເປັນປົກກະຕິ ແລະ ພ້ອມທັງແຈ້ງເຕືອນໄພໃຫ້ສັງຄົມຮັບຮູ້ທັນກັບສະພາບການ;
- ຕິດຕາມ, ກວດກາ ການປ້ອງກັນ, ການຄວບຄຸມ ແລະ ແກ້ໄຂບັນຫາມົນລະພິດ (ທາງດິນ, ນ້ຳ, ອາກາດ) ໃຫ້ໄດ້ 11 ເມືອງ ແລະ ສ້າງຖານຂໍ້ມູນໂຄງການ, ກິດຈະການໃຫ້ເປັນລະບົບ, ຮັບປະກັນການຕິດຕາມກວດກາແຜນຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃຫ້ໄດ້ 11 ເມືອງ.

**2.6. ຄາດໝາຍຂະແໜງ ເຕັກໂນໂລຊີ ແລະ ການສື່ສານ.**

- ສືບຕໍ່ຕິດຕາມ, ກວດກາ, ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດໃຫ້ບໍລິການໄປສະນີ ທີ່ມີຢູ່ໃນປະຈຸບັນໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບ, ກົດໝາຍ;
- ສືບຕໍ່ຊຸກຍູ້ ບັນດາບໍລິສັດໂທລະຄົມມະນາຄົມ ຂະຫຍາຍສາຍກາບໄຍແສງ (Optic Fiber) 227 Km; ຂະຫຍາຍເຄືອຂ່າຍໂທລະສັບໄປຫາບ້ານທີ່ບໍ່ມີສັນຍານ ຈຳນວນ 01 ບ້ານ (ບ້ານຫ້ວຍງູ ເມືອງປາກລາຍ), ສືບຕໍ່ປັບປຸງບ້ານທີ່ມີສັນຍານອ່ອນ ຈຳນວນ 19 ບ້ານ ແລະ ຂະຫຍາຍ ສັນຍານອິນເຕີເນັດ ຈຳນວນ 29 ບ້ານ ເພື່ອໃຫ້ປະຊາຊົນເຂົ້າເຖິງ ແລະ ນຳໃຊ້ຢ່າງສະດວກຂຶ້ນກວ່າເກົ່າ;
- ຊຸກຍູ້ບັນດາບໍລິສັດໂທລະຄົມມະນາຄົມ ເພື່ອຂຶ້ນທະບຽນເລກໝາຍໂທລະສັບໃຫ້ໃຊ້ບໍລິການ (ລູກຄ້າ) ໃຫ້ຖືກຕ້ອງຕາມລະບຽບການຂອງວຽກງານໂທລະຄົມມະນາຄົມ ແລະ ການສື່ສານ;
- ສືບຕໍ່ເຄື່ອນໄຫວໂຄສະນາເຜີຍແຜ່ການຫັນເປັນລັດຖະບານດີຈີຕອນ ແລະ ໄອຊີທີ, ໃຫ້ບັນດາຖັນແຖວພະນັກງານ-ລັດຖະກອນ ຂອງພະແນກການ, ອົງການ ກົມກອງອ້ອມຂ້າງແຂວງ ແລະ ບັນດາເມືອງ ໃຫ້ໄດ້ 04 ຊຸດຂຶ້ນໄປ;
- ຄຸ້ມຄອງວຽກຄວາມປອດໄພດ້ານຂໍ້ມູນຂ່າວສານ ແລະ ສົ່ງເສີມການນຳໃຊ້ລະບົບອິນເຕີເນັດໃຫ້ຖືກຕ້ອງ, ມີຄວາມສະຫງົບປອດໄພ ແລະ ຮັບແຈ້ງເຫດສຸກເສີນທີ່ເກີດຂຶ້ນທາງໄຊເບີ ຈາກພາກສ່ວນຕ່າງໆ, ພ້ອມທັງເຮັດໜ້າທີ່ເປັນກອງເລຂາ ສະຫຼຸບສັງລວມວຽກງານ ຄະນະກຳມະການຄຸ້ມຄອງອິນເຕີເນັດຂັ້ນແຂວງ ແລະ ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ເປັນປົກກະຕິ;
- ຊຸກຍູ້ສົ່ງເສີມໃຫ້ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງ ທີ່ມີເງື່ອນໄຂເປີດນຳໃຊ້ເວັບໄຊຂອງພາກລັດ (G-Web Platform) ໃຫ້ໄດ້ 06 ເວັບໄຊ ແລະ ສືບຕໍ່ຈັດຝຶກອົບຮົມການນຳໃຊ້ລະບົບຫ້ອງການທັນສະໄໝ (E-office V.3) ໃຫ້ພະນັກງານພາຍໃນ ແຂວງໄຊຍະບູລີ.

3. ຄາດໝາຍດ້ານວັດທະນະທຳ - ສັງຄົມ.

3.1. ຄາດໝາຍຂະແໜງ ສຶກສາທິການ ແລະ ກິລາ.

- ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ບໍ່ໃຫ້ຫຼຸດ 98% ຂຶ້ນໄປ;
- ອັດຕາເຂົ້າຮຽນໃໝ່ລວມ ປ.1 ໃຫ້ບັນລຸ 101 - 100%;
- ອັດຕາເຂົ້າໃໝ່ສຸດທິ ປ.1 ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6 - 10 ປີ) ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸ 101 - 100%;
- ອັດຕາປະລະຂັ້ນ ປ.1 ບໍ່ໃຫ້ເກີນ 2%;
- ອັດຕາຈົບຊັ້ນປະຖົມ (ອັດຕາເລື່ອນຂັ້ນ - ຈົບຊັ້ນ) ບໍ່ໃຫ້ຫຼຸດ 96,3%;
- ອັດຕາຄ້າງຫ້ອງຊັ້ນປະຖົມ ບໍ່ໃຫ້ເກີນ 2,1%;
- ອັດຕາປະລະຊັ້ນປະຖົມ ບໍ່ໃຫ້ເກີນ 1,9%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 (ທຽບໃສ່ນັກຮຽນຕົ້ນປີ ປ.5) ໃຫ້ໄດ້ 87,5% ຂຶ້ນໄປ;
- ດັດສະນີຄວາມສະເໝີພາບຍິງ - ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ໃນລະຫວ່າງ (0,97- 1,03);
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ ບໍ່ໃຫ້ຫຼຸດ 83%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ບໍ່ໃຫ້ຫຼຸດ 45%;
- ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ໄດ້ 74%;
- ອັດຕາປະລະມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 9%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ 1.033 ຄົນ;
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ໃຫ້ໄດ້ 25%;
- ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ໄດ້ 2%;
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເຂົ້າຮ່ວມການສ້າງຂະບວນເພື່ອສຸຂະພາບເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາບຸນປະເພນີ ແລະ ກິລາບຸນວັນສຳຄັນຕ່າງໆຂອງຊາດ-ສາກົນ ບໍ່ໃຫ້ຫຼຸດ 36%;
- ຄົ້ນຄວ້າ - ວິໄຈ ສະພາບການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ໄດ້ 2 ຫົວຂໍ້ຂຶ້ນໄປ.

3.2. ຄາດໝາຍຂະແໜງ ສາທາລະນະສຸກ

- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໃຫ້ຕ່ຳກວ່າ 10,8% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ຕ່ຳກວ່າ 10,9% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ຕ່ຳກວ່າ 9/1000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຕ່ຳກວ່າໄດ້ 10,5/1000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນການຕາຍຂອງແມ່ໃຫ້ຕ່ຳກວ່າໄດ້ 72,9/100000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາການເກີດລູກມີແພດຊ່ວຍ ໃຫ້ຫລາຍກວ່າ 84,3% ຂອງແມ່ມານເປົ້າໝາຍ;

- ສູ້ຊົນເຮັດໃຫ້ອັດຕາການສັກຢາວັກຊີນກັນພະຍາດໃນເດັກກຸ່ມ 1 ປີ ໃຫ້ໄດ້ 95,6% ຂຶ້ນໄປ;
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ນ້ຳສະອາດ ໃຫ້ໄດ້ຫລາຍກວ່າ 97,9% ຂອງຈຳນວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ວິດຖ່າຍ ໃຫ້ໄດ້ 98,6% ຂອງຈຳນວນຄອບຄົວທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາການປົກຄຸມປະກັນສຸຂະພາບ ໃຫ້ໄດ້ 100% ຂອງຈຳນວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 99,5% ຂອງຈຳນວນບ້ານທັງໝົດ.

3.3. ຄາດໝາຍຂະແໜງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ສ້ອມແປງແລະປ່ຽນຖ່າຍອຸປະກອນໂທລະໂຄ່ງທີ່ເປເພ ໃຫ້ໄດ້ 8 ບ້ານ ໃນທົ່ວແຂວງ;
- ຊຸກຍູ້ບັນດາເມືອງ, ພະແນກການ ແລະ ກົມກອງ ເກັບກຳຂ່າວເຫດການສຳຄັນຕ່າງໆ ສົ່ງໃຫ້ແຂວງ ແລະ ສູນກາງ ໃຫ້ໄດ້ 3000 ຂ່າວ; ລົງຂ່າວທາງອອນລາຍ ທາງເພຈ໌ NEWS XBL ຂອງແຂວງ ແລະ ເພຈ໌ Media Laos ໃຫ້ໄດ້ 800 ຂ່າວ;
- ຝຶກອົບຮົມທັກສະການຂຽນຂ່າວ ແລະ ເຕັກນິກການຖ່າຍພາບ, ຖ່າຍວິດີໂອໃຫ້ນັກຂ່າວ ຂອງເມືອງ ແລະ ນັກຂ່າວ ຂອງບັນດາພະແນກການ, ຫ້ອງການ, ກົມກອງ ອ້ອມຂ້າງແຂວງໃຫ້ໄດ້ 1 ຄັ້ງ ຄາດຄະເນຜູ້ເຂົ້າຮ່ວມ 30 ຄົນ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 570 ຄອບຄົວ, ສ້າງບ້ານວັດທະນະທຳ ໃຫ້ໄດ້ 4 ບ້ານ, ສ້າງກົມກອງວັດທະນະທຳ ໃຫ້ໄດ້ 30 ກົມກອງ ແລະ ສ້າງບ້ານວັດທະນະທຳແບບຢ່າງຕິດພັນກັບການທ່ອງທ່ຽວ ໃຫ້ໄດ້ 1 ບ້ານ;
- ອະນຸລັກ ແລະ ສົ່ງເສີມມໍລະດົກທາງດ້ານວັດທະນະທຳ ທີ່ເປັນຮູບປະທຳ ແລະ ນາມມະທຳ ໃຫ້ໄດ້ຂຶ້ນບັນຊີເປັນມໍລະດົກທ້ອງຖິ່ນຢ່າງໜ້ອຍ ໃຫ້ໄດ້ 1 ແຫ່ງ;
- ດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໃຫ້ໄດ້ 120,000 ຄົນ, ນຳເງິນຕາຕ່າງປະເທດເຂົ້າມາ ໃຫ້ໄດ້ 3 ລ້ານ ໂດລາສະຫະລັດ;
- ສົມທົບກັບພາກສ່ວນກ່ຽວຂ້ອງກະກຽມຂຶ້ນແຜນ ແລະ ຈັດຕັ້ງປະຕິບັດ ພິທີເປີດປີທ່ອງທ່ຽວລາວ 2024 ຂອງແຂວງໄຊຍະບູລີ;
- ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວ ໃຫ້ໄດ້ 1 ແຫ່ງ;
- ສ້າງຜະລິດຕະພັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃຫ້ໄດ້ 2 ຜະລິດຕະພັນ ຂຶ້ນໄປ;
- ຝຶກອົບຮົມໃຫ້ພະນັກງານທີ່ເຮັດວຽກບໍລິການການທ່ອງທ່ຽວ ໃຫ້ໄດ້ 100 ຄົນ ຂຶ້ນໄປ;
- ຊຸກຍູ້ສົ່ງເສີມການລົງທຶນຂອງເອກະຊົນເຂົ້າໃນວຽກງານທ່ອງທ່ຽວ ໃຫ້ໄດ້ 2 ຕື້ກີບ ຂຶ້ນໄປ.

3.4. ຄາດໝາຍຂະແໜງ ແຮງງານ ແລະ ສະຫວັດດີການສັງຄົມ.

- ສູ້ຊົນເຮັດໃຫ້ກຳລັງແຮງງານລາວໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ເພື່ອຕອບສະໜອງໃຫ້ແກ່ການພັດທະນາຕາມຂະແໜງການ ແລະ ໂຄງປະກອບເສດຖະກິດ ໃຫ້ໄດ້ 350 ຄົນ, ໃນນີ້ ກະສິກຳ 100 ຄົນ, ອຸດສາຫະກຳ 150 ຄົນ, ບໍລິການ 100 ຄົນ;
- ສູ້ຊົນຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກ ໃຫ້ໄດ້ 2.000 ຄົນ, ໃນນີ້ ກະສິກຳ ໃຫ້ໄດ້ 600 ຄົນ, ອຸດສາຫະກຳ ໃຫ້ໄດ້ 900 ຄົນ, ບໍລິການ ໃຫ້ໄດ້ 500 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ ໃຫ້ຜູ້ທີ່ມີຄຸນງາມຄວາມດີ ໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ໃຫ້ໄດ້ 150 ທ່ານ;
- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 1.000 ຄົນ, ໃນນີ້ ຜູ້ປະກັນຕົນພາກລັດ ໃຫ້ໄດ້ 120 ຄົນ, ພາກວິສາຫະກິດ ໃຫ້ໄດ້ 800 ຄົນ ແລະ ຜູ້ສະໝັກໃຈ ໃຫ້ໄດ້ 80 ຄົນ;

- ຂະຫຍາຍຕາໜ່າງປົກປ້ອງເດັກຂັ້ນບ້ານ ໃຫ້ໄດ້ 25 ບ້ານ;
- ປຸກລະດົມທຶນເຂົ້າກອງທຶນໄພພິບັດ ໃຫ້ໄດ້ 600 ລ້ານກີບ;
- ຊຸກຍູ້ສ້າງ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານ ໃຫ້ໄດ້ 25 ບ້ານ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2024.**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 3 ມາດຕະການ ຕາມການສະເໜີ ຂອງອົງການປົກຄອງແຂວງ, ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ ດັ່ງກາວ, ກອງປະຊຸມສະເໜີ ບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳ ບັນດາຂະແໜງການກ່ຽວຂ້ອງຂອງແຂວງ, ເມືອງ ໃຫ້ສືບຕໍ່ເພີ່ມທະວີ ການນຳພາ-ຊີ້ນຳ, ຄວາມເປັນເຈົ້າການ ແລະ ເພີ່ມຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດບັນຄາດໝາຍສູ້ຊົນທີ່ກຳນົດໄວ້ໃຫ້ບັນລຸຕາມແຜນການ ໂດຍມີການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຕ່ລະໄລຍະຢ່າງເປັນລະບົບຕໍ່ເນື່ອງ;
2) ສືບຕໍ່ປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕາມ 5 ຈຸດສຸມ ຮອດທ້າຍປີ 2025 ໃຫ້ສຳເລັດຕາມແຜນການ;
3) ເອົາໃຈໃສ່ ຊຸກຍູ້ສົ່ງເສີມການຜະລິດພາຍໃນ ຕິດພັນກັບການປຸງແຕ່ງໃຫ້ເປັນຂະບວນການກວ້າງຂວາງ ແລະ ເຂັ້ມແຂງຂຶ້ນເທື່ອລະກ້າວ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ;
4) ສືບຕໍ່ກຳນົດໂຄງສ້າງລາຄາສິນຄ້າ ອຸປະໂພກ-ບໍລິໂພກ ທີ່ຈຳເປັນຢູ່ພາຍໃນແຂວງ ເພື່ອຄຸ້ມຄອງລາຄາສິນຄ້າໃຫ້ມີຄວາມສະຫງົບ ແລະ ເຂັ້ມງວດໃນການຕິດຕາມກວດກາ, ສະກັດກັ້ນ ການນຳເຂົ້າສິນຄ້າ ຕາມແຈ້ງການຂອງທ່ານເຈົ້າແຂວງ ສະບັບເລກທີ 141/ຈຂ.ຊຍ, ລົງວັນທີ 5 ທັນວາ 2023 ໃຫ້ເຂັ້ມງວດ, ພ້ອມທັງນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມລະບຽບ ກົດໝາຍ;
5) ເອົາໃຈໃສ່ ຄຸ້ມຄອງວຽກງານກຳນົດໂຄງການລົງທຶນຂອງລັດ ແລະ ຈັດສັນງົບປະມານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນ: (1) ຮີບຮ້ອນໃນການ ປະສານສົມທົບ ກັບ ຄະນະກຳມະການທີ່ກ່ຽວຂ້ອງຂອງສະພາປະຊາຊົນແຂວງແຕ່ຫົວທີ ເພື່ອເປັນເອກະພາບໃນການຈັດສັນງົບປະມານການລົງທຶນປ້ອງປົກກະຕິແຂວງ. (2) ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳພະແນກແຜນການ ແລະ ການລົງທຶນ ດຳເນີນການກວດກາ ແລະ ທົບທວນ ໂຄງການທີ່ໄດ້ຮັບການຊຳລະຈາກການອອ່າຍໜີ້ 3 ແຈ ປ້ອງ 8.000 ຕື້ ກັບແຜນການລົງທຶນ ປະຈຳປີ 2024. (3) ມອບໃຫ້ອົງການປົກຄອງແຂວງ ຊີ້ນຳຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ເມືອງ ເອົາໃຈໃສ່ໃນການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ທີ່ລ້າຊ້າ ແລະ ແກ່ຍາວ ໂດຍສະເພາະໂຄງການທີ່ມີການສະເໜີຂໍດັດປັບລາຄາຫຼືຫົວໜ່ວຍການກໍ່ສ້າງຄືນໃໝ່ ໃຫ້ສົມເຫດສົມຜົນ;
6) ສືບຕໍ່ ດຶງດູດການລົງທຶນຂອງເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຕາມບັນຊີໝາຍຮຽກການລົງທຶນໃຫ້ໄດ້ຫຼາຍຂຶ້ນ, ຄຽງຄູ່ກັບ ການພັດທະນາ ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (MSME) ໃຫ້ເຂັ້ມແຂງ, ສາມາດເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ ຕາມນະໂຍບາຍຂອງລັດຖະບານໄດ້ວາງອອກ ເພື່ອກະຕຸ້ນໃຫ້ເສດຖະກິດຂະຫຍາຍຕົວ;
7) ສູ້ຊົນຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ ແລະ ຈັດເກັບລາຍຮັບຈາກແຫຼ່ງທີ່ມີຢູ່ແລ້ວໃຫ້ຄົບຖ້ວນ ຕິດພັນກັບການຫັນເປັນທັນສະໄໝ ເພື່ອຕ້ານການຮົ່ວໄຫຼໃຫ້ເຂັ້ມງວດ; ສືບຕໍ່ຫັນເອົາຫົວໜ່ວຍລາຍຮັບ 400 ລ້ານກີບຂຶ້ນໄປ ເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃຫ້ໄດ້ຢ່າງໜ້ອຍ 90% ຂຶ້ນໄປ;
8) ຊີ້ນຳ ພະແນກການທີ່ກ່ຽວຂ້ອງສືບຕໍ່ສັງລວມ ຂໍ້ມູນການນຳໃຊ້ທີ່ດິນຂອງປະຊາຊົນທີ່ກວມຢູ່ໃນ 3 ປະເພດ

ປ່າ ໃຫ້ລະອຽດ, ຈະແຈ້ງ ເພື່ອນຳສະເໜີ ອົງການທີ່ມີສິດອຳນາດພິຈາລະນາຫັນປ່ຽນ;

9) ຮີບຮ້ອນສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງຫຼວງຂອງແຂວງ ແລະ ເມືອງ ທີ່ເປ່ເພ ໃຫ້ສຳເລັດ ຕາມແຜນການໂດຍໄວ;

10) ເອົາໃຈໃສ່ ໃນການປັບປຸງກົນໄກການປະສານງານ, ການແບ່ງຂັ້ນຄຸ້ມຄອງໂຄງການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ຈະແຈ້ງ, ພ້ອມທັງດຳເນີນການຕິດຕາມກວດກາການຈັດ ຕັ້ງປະຕິບັດໃຫ້ເຂັ້ມງວດ ແລະ ເປັນປົກກະຕິຕໍ່ເນື່ອງ;

11) ເອົາໃຈໃສ່ໃນການແກ້ໄຂບັນຫາຜົນກະທົບທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການ ພັດທະນາຕ່າງໆ ເປັນຕົ້ນ ການຊົດເຊີຍຄ່າເສຍຫາຍ, ການຈັດສັນຍົກຍ້າຍປະຊາຊົນ, ການປະຕິບັດພັນທະ ຕໍ່ພາກລັດ ແລະ ປະຊາຊົນ ໃຫ້ໄປຕາມກົດໝາຍຢ່າງເຂັ້ມງວດ;

12) ສືບຕໍ່ສຸມໃສ່ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ 5 ນະໂຍບາຍ, 10 ມາດຕະການແກ້ໄຂບັນຫາການຂາດແຄນຄູ ສອນ ແລະ 3 ນະໂຍບາຍ, 13 ມາດຕະການ ແກ້ໄຂບັນຫາການປະລະການຮຽນ ຕາມມະຕິຕົກລົງຂອງ ລັດຖະບານ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນສູງ;

13) ເອົາໃຈໃສ່ ຊຸກຍູ້ ແລະ ສົ່ງເສີມ ວຽກງານການທ່ອງທ່ຽວ ເພື່ອຮອງຮັບໃຫ້ແກ່ການເປີດປີທ່ອງທ່ຽວລາວ 2024 ໂດຍຕິດພັນກັບ ການສ້າງສະພາບແວດລ້ອມທີ່ດີ, ສິ່ງອຳນວຍຄວາມສະດວກດ້ານຕ່າງໆໃຫ້ແກ່ນັກ ທ່ອງທ່ຽວ, ປັບປຸງຄຸນນະພາບການບໍລິການທ່ອງທ່ຽວໃຫ້ດີຂຶ້ນ;

14) ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານ ພາຍໃນ ແລະ ຕ່າງປະເທດ, ສຸມໃສ່ແກ້ໄຂບັນຫາ ການໄປອອກແຮງງານຢູ່ຕ່າງປະເທດ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ຫຼຸດລົງ;

15) ເອົາໃຈໃສ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ໃນຂົງເຂດຕ່າງໆໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນ ການ ຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ ໃຫ້ມີຜົນສັກສິດ, ແນໃສ່ ຮັບປະກັນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດ ຂຶ້ນໄປຕາມກົດໝາຍ, ຕາມຫຼັກການ ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ; ປະຕິບັດ ມາດຕະການເດັດຂາດຕໍ່ ຫົວໜ່ວຍ ງົບປະມານ ທີ່ລະເມີດວິໄນແຜນການ-ການເງິນ.

**ມາດຕາ 4 ການຈັດຕັ້ງປະຕິບັດ:**

1) ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດ ແລະ ອົງການປົກຄອງເມືອງ ຈັດຕັ້ງ ປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2) ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ບັນດາຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກ ຕັ້ງເມືອງ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ:**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ